ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ເລກທີ 224 -----/ສສກ

ນະຄອນຫຼວງວຽງຈັນ, ວັນທີ 19 ກຸມພາ 2019

# ມະຕິ

## ກອງປະຊຸມຄັ້ງທີ VII ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມ ຄັ້ງທີ VII ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ໄຂຂຶ້ນໃນ ວັນອັງຄານ ທີ 05 ກຸມພາ 2019 ທີ່ໂຮງແຮມຄຣາວພລາຊາ, ນະຄອນຫຼວງວຽງຈັນພາຍໃຕ້ການເປັນປະທານຂອງ ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານ ຄຊພຊ ໂດຍມີບັນດາທ່ານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະກຳມະການເພື່ອການພັດທະນາຊັບພະຍາກອນມະນຸດ ຂັ້ນສູນກາງ ແລະ ຂັ້ນແຂວງ/ນະຄອນຫຼວງ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ ລວມທັງໝົດ 204 ທ່ານ (ຍິງ 42 ທ່ານ).

ກອງປະຊຸມ ໄດ້ຮັບຟັງການລາຍງານກ່ຽວກັບ 1). ຄວາມຄືບໜ້າການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ການຜັນຂະຫຍາຍບາງຜົນໄດ້ຮັບຈາກກອງປະຊຸມໂຕະມົນ ປີ 2017; 2). ແຜນຍຸດທະສາດພັດທະນາຄູ ແລະ ບຸກຄະລາກອນຂອງຂະແໜງການສຶກສາທິການ ແລະ ກິລາ; 3). ການລາຍງານຄວາມຄືບໜ້າຂອງກະຊວງການເງິນໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດພັດທະນາຊັບພະຍາກອນມະນຸດແຫ່ງຊາດ; 4). ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ; ແລະ 5). ແບບຈຳລອງການພະຍາກອນຕະຫຼາດແຮງງານ.

ຜ່ານການຮັບຟັງ, ຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນຂອງບັນດາທ່ານຜູ້ແທນຕໍ່ເນື້ອໃນຂ້າງເທິງນັ້ນ, ກອງປະຊຸມໄດ້ມີຄວາມເປັນເອກະພາບຮັບຮອງເອົາເປັນມະຕິກອງປະຊຸມ ດັ່ງນີ້:

1. ກອງປະຊຸມເຫັນດີຮັບຮອງເອົາ ບົດລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025 ແລະ ການຜັນຂະຫຍາຍບາງຜົນໄດ້ຮັບຈາກກອງປະຊຸມໂຕະມົນ ປີ 2017 ໂດຍມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ນຳໄປປັບປຸງຕາມຄຳເຫັນຂອງກອງປະຊຸມ;

2. ໃຫ້ຄະນະກໍາມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດຊີ້ນໍານໍາພາ ຄະນະກໍາມະການພັດທະນາຊັບພະຍາກອນມະນຸດ ຂັ້ນກະຊວງ, ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ຈັດຕັ້ງກອງປະຊຸມປະຖົມມະລືກ ແລະ ເຜີຍແຜ່ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຮອດປີ 2025;
3. ຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສືບຕໍ່ຊີ້ນານາພາການຜັນຂະຫຍາຍບາງຜົນໄດ້ຮັບ ຂອງກອງປະຊຸມໂຕະມົນປະຈໍາປີ 2017 ໃຫ້ເປັນແຜນງານ, ໂຄງການ ແລະ ແຜນການ ພ້ອມໃຫ້ມີງົບປະມານ ໂດຍການຮ່ວມມືກັບນັກວິຊາການພາຍໃນ, ຕ່າງປະເທດ ແລະ ຜູ້ໃຫ້ທຶນເຊັ່ນ:
   3.1 ໃຫ້ຄະນະຄົ້ນຄ້ວາ ແລະ ພັດທະນາແບບຈໍາລອງການພະຍາກອນຕະຫຼາດແຮງງານ ສືບຕໍ່ປັບປຸງແບບຈໍາລອງ ໃຫ້ກວມເອົາການສຶກສາຕໍາແໜ່ງງານໃນຂະແໜງລົດໄຟ ແລະ ໂຄງການລົງທຶນຕ່າງໆ ແລະ ດໍາເນີນການເຮັດທົດລອງຢູ່ຂັ້ນກະຊວງ, ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ຕາມໂຄງສ້າງເສດຖະກິດ ເພື່ອໃຫ້ມີເຄື່ອງມືຮັບໃຊ້ການພະຍາກອນຕະຫຼາດແຮງງານໃນໄລຍະຍາວ; ພ້ອມທັງດໍາເນີນການວິໄຈດ້ານແຮງງານເຫຼືອ-ບໍ່ພໍ ; ແລະ
   3.2 ໃຫ້ຄະນະວິຊາການພັດທະນາຍຸດທະສາດ/ແຜນປະຕິບັດງານການຝຶກອົບຮົມພາສາອັງກິດໃຫ້ແກ່ພະນັກ ງານ-ລັດຖະກອນ ສືບຕໍ່ປັບປຸງຍຸດທະສາດ/ແຜນປະຕິບັດງານ ແລະ ສ້າງແຜນການຝຶກອົບຮົມພາສາອັງກິດໃຫ້ແກ່ພະນັກງານ-ລັດຖະກອນ ທົ່ວປະເທດ;
4. ໃຫ້ຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຄົ້ນຄວ້ານໍາສະເໜີງົບປະມານໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ຮອດປີ 2025 ຕໍ່ລັດຖະບານ ໂດຍເອົາເຂົ້າໃນແຜນງົບປະມານປົກກະຕິຂອງຂະແໜງການ;
5. ໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ສົກປີ 2019, ມອບໃຫ້ກອງເລຂາຄະນະກໍາມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ປະຕິບັດດັ່ງນີ້:
   5.1 ສ້າງຄູ່ມືແນະນໍາການຈັດຕັ້ງປະຕິບັດຍຸດທະສາດເພື່ອການພັດທະນາຊັບພະຍາກອນມະນຸດ ໃຫ້ຄະນະກໍາມະການຂັ້ນກະຊວງ, ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ໃຫ້ຊັດເຈນ;
   5.2 ສືບຕໍ່ຮ່ວມເຮັດວຽກກັບ ຄະນະກໍາມະການພັດທະນາຊັບພະຍາກອນມະນຸດຂັ້ນກະຊວງ,ອົງການທຽບເທົ່າກະຊວງ ແລະ ຂັ້ນແຂວງ/ນະຄອນຫຼວງ ໃນການສ້າງແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດ;
   5.3 ສືບຕໍ່ເຮັດວຽກກັບຄູ່ຮ່ວມພັດທະນາພາຍໃນ ແລະ ຕ່າງປະເທດ ເພື່ອຂົນຂວາຍການສະໜັບສະໜູນດ້ານວິຊາການ ແລະ ງົບປະມານ ໃນການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຮອດປີ 2025 ແລະ ສ້າງລະບົບການຕິດຕາມ, ປະເມີນຜົນ ແລະ ການລາຍງານ;
   5.4 ທົບທວນການຈັດຕັ້ງປະຕິບັດຍຸດທະສາດຂອງການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025.
6. ໃຫ້ຄະນະກໍາມະການພັດທະນາຊັບພະຍາກອນມະນຸດຂອງຂະແໜງການສຶກສາທິການ ແລະ ກິລາ ສືບຕໍ່ປັບປຸງແຜນຍຸດທະສາດການພັດທະນາຄູ ແລະ ບຸກຄະລາກອນ ຂອງຂະແໜງການສຶກສາທິການ ແລະ ກິລາ ຮອດປີ 2025 ໃຫ້ສໍາເລັດ ແລະ ສາມາດນໍາໄປຈັດຕັ້ງປະຕິບັດໄດ້;
7. ໃຫ້ຄະນະກໍາມະການພັດທະນາຊັບພະຍາກອນມະນຸດຂອງຂະແໜງການເງິນ ສືບຕໍ່ຈັດຕັ້ງປະຕິບັດຍຸດທະສາດພັດທະນາການຈັດຕັ້ງ ແລະ ບຸກຄະລາກອນຂອງຂະແໜງການເງິນ ແລະ ລາຍງານຄວາມຄືບໜ້າ ໃຫ້ແກ່ ຄຊພຊ ໂດຍຜ່ານກອງເລຂາ ຄຊພຊ ໃນເດືອນພະຈິກ 2019;

8. ໃຫ້ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ສືບຕໍ່ປະສານສົມທົບກັບພາກສ່ວນກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອເຮັດໃຫ້ລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ ເຂັ້ມແຂງ ແລະ ສາມາດບໍລິການຂໍ້ມູນໃຫ້ແກ່ສັງຄົມໄດ້ດີກວ່າເກົ່າ ແລະ ປະສານສົມທົບກັບພາກສ່ວນຮັບຜິດຊອບຄຸ້ມຄອງລະບົບບໍລິຫານການສຶກສາ ໃນການຮ່ວມມືຢ່າງໃກ້ຊິດ ກັບກົມພັດທະນາສີມືແຮງງານ ແລະ ຈັດຫາງານ ແລະ ມີບົດບັນທຶກການຮ່ວມມືສະເພາະ ເພື່ອຮ່ວມພັດທະນາຮອບ ດ້ານໃນການສ້າງລະບົບ ແລະ ແບ່ງປັນຂໍ້ມູນ;
9. ໃຫ້ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ຊີ້ນຳນຳພາ ຄະນະກຳມະການພັດທະນາຊັບພະຍາກອນມະນຸດຂອງກະຊວງ, ອົງການທຽບເທົ່າກະຊວງ ແລະ ແຂວງ/ນະຄອນຫຼວງ ສືບຕໍ່ສ້າງ ແລະ ປະຕິບັດແຜນຍຸດທະສາດພັດທະນາຊັບພະຍາກອນມະນຸດຂອງຕົນໃຫ້ສອດຄ່ອງກັບຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025;
10. ກອງປະຊຸມຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດຄັ້ງທີ VIII ຈະຈັດຂຶ້ນພາຍໃນເດືອນ ທັນວາ 2019.

ລັດຖະມົນຕີ

ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ນ.ແສງເດືອນ ຫຼ້າຈັນທະບູນ